ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 363 /ຈທວ

ນະຄອນຫຼວງວຽງຈັນ, ວັນທີ 29 ພະຈິກ 2022

**ເຖິງ: - ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ**
**- ຫົວໜ່ວຍວິສາຫະກິດທີ່ມີລາຍຊື່ຕາມແຈ້ງການສະບັບນີ້**

**ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ຕໍ່ ບັນດາຫົວໜ່ວຍວິສາຫະກິດ ທີ່ບໍ່ໄດ້ມີການແຈ້ງມອບອາກອນ ຢູ່ ນະຄອນຫຼວງວຽງຈັນ**

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ໜັງສືສະເໜີ ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ເລກທີ 1581/ພອຄນວ.ທຄວ, ລົງວັນທີ 22 ກັນຍາ 2022;
- ອີງຕາມ ສະໂນດນຳສົ່ງ ຂອງ ສ່ວຍສາອາກອນ ປະຈຳນະຄອນຫຼວງວຽງຈັນ ເລກທີ 1057/ສອ.ນວ, ລົງວັນທີ 08 ສິງຫາ 2022.

ບົນພື້ນຖານໜັງສືສະເໜີ ເລກທີ 1581/ພອຄນວ.ທຄວ, ລົງວັນທີ 22 ກັນຍາ 2022 ຂອງ ພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ກ່ຽວກັບ ວິສາຫະກິດ ທີ່ບໍ່ໄດ້ມີການແຈ້ງມອບອາກອນ ຢູ່ ນະຄອນຫຼວງວຽງຈັນ. ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ແຈ້ງມາຍັງ ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ວິສາຫະກິດຈຳນວນ 954 ຫົວໜ່ວຍ ທີ່ມີລາຍຊື່ຄັດຕິດຕາມແຈ້ງການສະບັບນີ້ ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ເນື່ອງຈາກວ່າ **ບໍ່ໄດ້ມີການແຈ້ງເສຍອາກອນ** (ລາຍຊື່ວິສາຫະກິດທີ່ຖືກແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວສາມາດກວດສອບເພີ່ມເຕີມທີ່ www.ned.moic.gov.la ຫຼື facebook: ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ຫຼື QR Code ທີ່ຄັດຕິດແຈ້ງການສະບັບນີ້);
2. ຜົນຂອງການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ມີລາຍລະອຽດດັ່ງນີ້:

   2.1 ຕ້ອງເຂົ້າໄປພົວພັນນຳ ເຈົ້າໜ້າທີ່ສ່ວຍສາອາກອນ ປະຈຳນະຄອນຫຼວງວຽງຈັນ ເພື່ອປະກອບເອກະສານ ກ່ຽວກັບການແຈ້ງເສຍອາກອນ ໃຫ້ສຳເລັດ. ແລ້ວນຳເອົາໜັງສືຢັ້ງຢືນການການພົວພັນດັ່ງກ່າວມາແຈ້ງຕໍ່ເຈົ້າໜ້າທີ່ທະບຽນວິສາຫະກິດ ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ;

   2.2 ຫ້າມເຄື່ອນໄຫວທຸລະກິດຢ່າງເດັດຂາດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດ ເກັບຮັກສາໄວ້;

Scanned with CamScanner

3. ການໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ມີຜົນປະຕິບັດ 30 ວັນ ນັບແຕ່ວັນທີ 28 ພະຈິກ 2022 ຫາ ວັນທີ 28 ທັນວາ 2022. ໃນກໍລະນີ ບໍ່ສາມາດປະຕິບັດໄດ້ຕາມກຳນົດເວລາດັ່ງກ່າວ ເຈົ້າໜ້າທີ່ທະບຽນວິສາຫະກິດ ຈະອອກແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ;

4. ຖ້າລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ ບໍ່ວ່າຈະດ້ວຍເຫດຜົນໃດກໍຕາມ ຈະຖືກປະຕິບັດມາດຕະການ ຕາມ ມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ;

ແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດ.

ເຈົ້າໜ້າທີ່ທະບຽນວິສາຫະກິດ

ອະພິສິດ ແສງສຸລິວົງ

ບ່ອນສົ່ງ

- ກົມສວຍສາອາກອນ (ກະຊວງການເງິນ) 1 ສະບັບ;
- ວິສາຫະກິດທີ່ຖືກໂຈະຊົ່ວຄາວ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ 1 ສະບັບ;
- ສຳເນົາ 1 ສະບັບ.

22/11/22 Enterprise 900

ສາມາດກວດສອບ ລາຍຊື່ວິສາຫະກິດ ຈຳນວນ 954 ທີ່ວໜ່ວຍ ຜ່ານຄິວອາໂຄດ.

Scanned with CamScanner